# ໃບສະຫມັກນຳໃຊ້ໂມບາຍແບັງຄິງ LDB TRUST

## LDB TRUST Mobile Banking Registration Form

### 1) ລາຍລະອຽດຂໍ້ມູນຜູ້ໃຊ້ / User Information

ຄຳນຳຫນ້າ / Name Title: ☐ ທ້າວ / Mr. ☐ ນາງ / Ms. ☐ ............................

- **ຊື່ ແລະ ນາມສະກຸນ / Name and Surname** ……………..............................................................
  - **ທີ່ຢູ່ / Address:** ບ້ານ/Village......................... ເມືອງ/District........................
    ແຂວງ/Province........................
  - **ເອກະສານຢັ້ງຢືນຕົວຕົນ / Identified Document:**
    ☐ ບັດປະຈຳຕົວ/ID Card ☐ ປຶ້ມສຳມະໂນຄົວ/Family Book ☐ ຫນັງສືເດີນທາງ/Passport
    ເລກທີ/No'................................ ລົງວັນທີ/Issued Date..........................
    ວັນຫມົດອາຍຸ/Expired Date....................... ອອກໃຫ້ໂດຍ/Issued By......................................
- **ປະເພດລູກຄ້າ / Customer Type:**
  ☐ ບຸກຄົນທົ່ວໄປ / Personal ☐ ນິຕິບຸກຄົນ / Corporate ☐ ......................................

### 2) ເລືອກປະເພດການບໍລິການ LDB TRUST / Choose type of LDB TRUST service

☐ ໂປຣແກຣມເທິງມືຖື /Mobile Application ☐ ແຈ້ງເຕືອນທຸລະກຳຜ່ານຂໍ້ຄວາມ / SMS Alert

### 3) ຂໍ້ມູນລົງທະບຽນ LDB TRUST / LDB TRUST Sign Up Details

ເລກບັດເອທີເອັມ / ATM Card Number ☐☐☐☐☐☐☐☐ - ☐☐☐☐☐☐☐☐




ບັດເອທີເອັມຫມົດອາຍຸ (ເດືອນ - ປີ) / Card Expired (Month - Year) ☐☐ / ☐☐

ລະຫັດລູກຄ້າ (ປຶ້ມບັນຊີເງິນຝາກ) / Customer ID (Passbook) ☐☐☐☐☐☐

ເລກບັນຊີ / Account Number ☐☐ - ☐☐☐ - ☐☐☐☐ - ☐☐☐☐☐☐☐




ເບີໂທລະສັບມືຖື / Mobile Phone Number ☐☐☐ - ☐☐☐☐☐☐☐☐

ອີເມວ / E-mail ……………………………………………………………………………………………

ທີ່....................................... ວັນທີ...............................

| ເຊັນຫົວຫນ້າຮັບຜິດຊອບ<br>**Authorizer Sign** | ເຊັນພະນັກງານຮັບຟອມ<br>**Officer Sign** | ເຊັນລູກຄ້າ<br>**Customer Sign** |
|---|---|---|

# ເງື່ອນໄຂການນຳໃຊ້ LDB TRUST

## 1) ຄຸນລັກສະນະຂອງຜະລິດຕະພັນ LDBTRUST.

LDB TRUST ແມ່ນຜະລິດຕະພັນໂມບາຍແບ້ງກິ້ງຂອງ ທພລ ທີ່ໃຫ້ບໍລິການຜ່ານໂທລະສັບມືຖື (Smart Phone) ແລະ ເວັບໄຊທ໌ (Web browser) ສຳລັບລູກຄ້າທີ່ມີບັນຊີເງິນຝາກກັບ ທພລ ເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຄ້າ ໃນການເຮັດທຸລະກຳທາງດ້ານການເງິນການທະນາຄານ ເປັນຕົ້ນແມ່ນ: ການຊຳລະໃບບິນ, ໂອນເງິນ ແລະ ລະບົບອຳນວຍຄວາມສະດວກອື່ນໆ ທີ່ຈະຊ່ວຍໃຫ້ເຈົ້າຂອງບັນຊີສາມາດບໍລິຫານ ແລະ ຕິດຕາມບັນຊີຂອງຕົນເອງໄດ້ ໂດຍສະເພາະແມ່ນ:

1. ກວດຍອດເງິນ ແລະ ກວດການເຄື່ອນໄຫວບັນຊີເງິນຝາກປະຢັດ, ກະແສລາຍວັນ ແລະ ຝາກປະຈຳ.
2. ກວດສອບຍອດເງິນກູ້, ປະຫວັດການຊຳລະຕົ້ນທຶນ ແລະ ດອກເບ້ຍ.
3. ການໂອນເງິນພາຍໃນ ທພລ ໂດຍມີ 03 ແບບຄື: ໂອນຄັ້ງດຽວ (One time transfer), ໂອນອານາຄົດ (Future transfer) ແລະ ໂອນເປັນລາຍການ (Schedule transfer).
4. ໂອນເງິນຊຳລະຄ່າໄຟຟ້າ, ນ້ຳປະປາ, ພາສີ-ອາກອນ, ສິນເຊື່ອເຊົ່າ-ຊື້, ໃບບິນໂທລະຄົມ ແລະ ອື່ນໆ...
5. ການໂອນເງິນຊຳລະສະສາງສິນຄ້າຕ່າງໆ ຜ່ານ QR Code.
6. ສາມາດກວດເບິ່ງການເຄື່ອນໄຫວ ຂອງແຕ່ລະການຊຳລະໃບບິນໄດ້.
7. ໂອນລອຍທາງມືຖື (ໂອນເງິນໃຫ້ຜູ້ທີ່ບໍ່ມີບັນຊີ ໃນທະນາຄານ).
8. ຊື້ມູນຄ່າບັດ (Top up / prepaid) ແລະ ຈ່າຍຄ່າໂທລະສັບມືຖືແບບລາຍເດືອນຂອງ 4 ໂທລະຄົມ (Postpaid).
9. ການຄຸ້ມຄອງບັດເອທີເອັມ ແລະ ກວດການເຄື່ອນໄຫວຂອງບັດ.
10. ກວດກາລາຄ່າຮຸ້ນ, ຜົນຫວຍ, ອັດຕາແລກປ່ຽນ ແລະ ອື່ນໆ.

## 2) ຄວາມຮັບຜິດຊອບຂອງທະນາຄານ.

1. ໃນກໍລະນີທີ່ເກີດມີຄວາມຜິດພາດ, ຫລ້າຊ້າ ແລະ ຄວາມເສຍຫາຍໃດໆອັນເນື່ອງຈາກ ການຮັບ-ສົ່ງຂໍ້ມູນ ຂອງລະບົບເຄືອຂ່າຍໂທລະຄົມ ຫລື ອຸປະກອນຂອງຜູ້ໃຊ້ບໍລິການເອງ ທະນາຄານຈະບໍ່ຮັບຜິດຊອບໃນກໍລະນີນີ້.
2. ກໍລະນີທີ່ທະນາຄານເມີນເສີຍ ຕໍ່ການປະຕິບັດຕາມຄຳສັ່ງ ຂອງຜູ້ໃຊ້ບໍລິການທີ່ເປັນສາເຫດ ເຮັດໃຫ້ຜູ້ໃຊ້ບໍລິການ ຫຼື ຜູ້ຮັບໂອນເງິນບໍ່ໄດ້ຮັບເງິນຕາມຄຳສັ່ງຂອງຜູ້ໃຊ້ບໍລິການ, ກໍລະນີດັ່ງກ່າວຖືວ່າເປັນຄວາມຮັບຜິດຊອບຂອງທະນາຄານ ຍົກເວັ້ນແຕ່ເປັນກໍລະນີ ທີ່ຜູ້ໃຊ້ບໍລິການມີຈຳນວນເງິນໃນບັນຊີບໍ່ພຽງພໍ, ຖືກລະງັບວົງເງິນສິນເຊື່ອ, ຜູ້ໃຊ້ບໍລິການຢູ່ໃນລະຫວ່າງ ການຖືກດຳເນີນຄະດີໃດໜຶ່ງຕາມກົດໝາຍ, ທະນາຄານໄດ້ແຈ້ງເຖິງຂໍ້ຂັດຂ້ອງ ໃນການໂອນເງິນໃຫ້ຜູ້ໃຊ້ບໍລິການຮັບຮູ້ກ່ອນແລ້ວ, ຜິດເງື່ອນໄຂຂໍ້ຕົກລົງທີ່ໄດ້ໃຫ້ໄວ້ກັບທະນາຄານ ຫຼື ເກີດເຫດສຸດວິໄສໃນການໃຫ້ບໍລິການ ກໍລະນີດັ່ງກ່າວບໍ່ຖືເປັນຄວາມຮັບຜິດຊອບຂອງທະນາຄານ.
3. ທະນາຄານຈະດຳເນີນການ ສືບສວນແກ້ໄຂຄວາມຜິດພາດ ແລະ ຄວາມເສຍຫາຍໃດໜຶ່ງ ໂດຍຈະຍຶດຖືຫຼັກການຂອງລັດ ແລະ ກົດຫມາຍແຫ່ງ ສ.ປ.ປ.ລາວ ເປັນຫຼັກ. ທະນາຄານຂໍສະຫງວນສິດໃນການປະຕິເສດ ຕໍ່ຄຳຮ້ອງຂໍຕ່າງໆທີ່ຂັດກັບຂໍ້ກຳນົດຫຼັກການ ຂອງລັດ ແລະ ກົດໝາຍແຫ່ງ ສ.ປ.ປ.ລາວ.

## 3) ຄວາມຮັບຜິດຊອບຂອງຜູ້ໃຊ້ບໍລິການ.

1. ທຸກໆການເຄື່ອນໄຫວ ເຮັດທຸລະກຳທາງດ້ານການເງິນຜ່ານ LDB TRUST ຂອງ ທພລ ທີ່ເກີດຂຶ້ນຈາກລະຫັດ ແລະ ບັນຊີຜູ້ນຳໃຊ້ ບໍ່ວ່າຈະເປັນກໍລະນີໃດໆກໍ່ຕາມ ແມ່ນຢູ່ໃນຄວາມຮັບຜິດຊອບຂອງເຈົ້າຂອງບັນຊີຜູ້ນຳໃຊ້ທັງໝົດ, ເຊິ່ງ ທພລ ຈະບໍ່ໄດ້ຮັບຜິດຊອບແຕ່ຢ່າງໃດ.
2. ຜູ້ໃຊ້ບໍລິການຕ້ອງຮັກສາລະຫັດສ່ວນຕົວ, ຂໍ້ມູນລັບ, ອຸປະກອນທີ່ນຳໃຊ້ໃນການບໍລິການ LDB TRUST ນີ້ໄວ້ຢ່າງດີ ແລະ ສະຖານທີ່ປອດໄພ.
3. ໃນກໍລະນີລະຫັດຊື່ຜູ້ໃຊ້ບໍລິການ ຫລື ລະຫັດສ່ວນຕົວ, ຂໍ້ມູນຕ່າງໆທີ່ຖືກລັກ ຫລື ເຮັດເສຍຫາຍ ແມ່ນໃຫ້ແຈ້ງທະນາຄານທັນທີ ເພື່ອທະນາຄານຈະໄດ້ລັອກບັນຊີ ແລະ ລະຫັດຜູ້ນຳໃຊ້ ໂດຍໂທທີ່ເບີ 021 216176 ແລະ ຕ້ອງຍອມຮັບວ່າທຸກໆທຸລະກຳ ທີ່ເກີດຂຶ້ນກ່ອນເວລາທີ່ທ່ານໄດ້ແຈ້ງທະນາຄານຮັບຊາບ ແມ່ນຈະຢູ່ໃນຄວາມຮັບຜິດ ຊອບຂອງຜູ້ກ່ຽວເອງ.
4. ຜູ້ໃຊ້ບໍລິການຍິນຍອມທີ່ຈະເສຍຄ່າທຳນຽມ ແລະ ຄ່າບໍລິການອື່ນໆທີ່ກ່ຽວພັນກັບການບໍລິການທາງດ້ານ LDB TRUST ຕາມອັດຕາທີ່ທາງທະຄານໄດ້ກຳນົດໄວ້ ໂດຍຍິນຍອມໃຫ້ທະນາຄານຫັກເງິນຈາກບັນຊີຂອງຜູ້ໃຊ້ບໍລິການໂດຍກົງ.
5. ຜູ້ໃຊ້ບໍລິການຍິນຍອມໃຫ້ທະນາຄານເພີ່ມ, ດັດແກ້ ຫລື ປ່ຽນແປງເງື່ອນໄຂສັນຍາການບໍລິການ ທີ່ໃຊ້ກັບຜະລິດຕະພັນເອເລັກໂທນິກ ເຊັ່ນ: ຄ່າທຳນຽມ, ຄ່າບໍລິການຕ່າງໆ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນກັບການໃຊ້ບໍລິການ ຜ່ານລະບົບທະນາຄານຢ່າງເໝາະສົມ.
6. ຜູ້ໃຊ້ບໍລິການຍອມຮັບເອກະສານ, ເອກະສານອີເລັກໂທນິກ (E-slip) ແລະ ຫລັກຖານທັງໝົດ ທີ່ກ່ຽວຂ້ອງກັບການຫັກເງິນໃນບັນຊີເງິນຝາກ, ບັນຊີສິນເຊື່ອ ເປັນຕົ້ນແມ່ນການໂອນເງິນ ຫລື ການເຮັດທຸລະກຳຕ່າງໆໃນບັນຊີຜູ້ໃຊ້ບໍລິການ ຫລື ເອກະສານຕ່າງໆທີ່ທາງທະນາຄານ ໄດ້ລະບຸໄວ້ໃນເງື່ອນໄຂການໃຊ້ບໍລິການ LDB Trust ລ້ວນແຕ່ເປັນຄວາມຈິງ ແລະ ຖືກຕ້ອງ.

ຜູ້ໃຊ້ບໍລິການ ແມ່ນໄດ້ອ່ານ, ເຂົ້າໃຈ, ແລະ ຕົກລົງເຫັນດີ ຕໍ່ທຸກລາຍລະອຽດ ກ່ຽວກັບລະບຽບຂໍ້ກຳນົດ ແລະ ເງື່ອນໄຂທັງຫມົດ ທີ່ລະບຸໄວ້ໃນແບບຟອມສະຫັມກສະບັບນີ້ ກັບທະນາຄານພັດທະນາລາວແລ້ວ.

ທີ່......................................., ວັນທີ..........................

**ລາຍເຊັນພະນັກງານທະນາຄານ**      **ລາຍເຊັນຜູ້ໃຊ້ບໍລິການ**

ຊື່........................................      ຊື່........................................